# ຄວາມຈິງຕໍ່ມວນຊົນ

Ottawa County Health Department

## ໂຣກໝາກເບີດ [MUMPS]

### ໂຣກໝາກເບີດຄືຫຍັງ?

ໂຣກໝາກເບີດເປັນໂຣກທີ່ບໍ່ຮ້າຍແຮງ ແລະ ເກີດຈາກວາຍຣັສ.

### ໂຣກໝາກເບີດແຜ່ລາມແນວໃດ?

ໂຣກໝາກເບີດອາດຈະແຜ່ລາມດ້ວຍວິທີດັ່ງຕໍ່ໄປນີ້:

- ນ້ຳຂີ້ມູກຈາກດັງ ແລະ ຮູຄໍຂອງຄົນທີ່ມີໂຣກໝາກເບີດ.
- ແຕະຕ້ອງສິ່ງຂອງທີ່ມີນ້ຳຂີ້ມູກຂອງຄົນທີ່ເປັນໂຣກນີ້ຕິດຢູ່ນຳ.

### ອາການບາງຢ່າງມີຫຍັງແດ່?

ອາການອາດຈະຮ່ວມດ້ວຍ:

- ຕ່ອມນ້ຳລາຍທີ່ຢູ່ທາງໜ້າ ແລະ ກ້ອງຫູຈະໄຄ່ ແລະ ເຈັບ
- ຄີງຮ້ອນ ແລະ ໝາວເຍືອກ
- ປວດຫົວ
- ສຳລັບຜູ້ຊາຍໄຂ່ຫຳຂ້າງໜຶ່ງ ຫລື ທັງສອງຂ້າງຈະໄຄ່ ແລະ ເຈັບ.

### ຈະກວດພົບໂຣກໝາກເບີດໄດ້ແນວໃດ?

ໂດຍການກວດຮ່າງກາຍ ແລະ ກວດເລືອດ.

### ຈະຮັກສາໂຣກໝາກເບີດໄດ້ດ້ວຍວິທີໃດ?

- ບໍ່ມີວິທີຮັກສາສຳລັບໂຣກໝາກເບີດ. ຫລັງຈາກຕ່ອມນ້ຳລາຍໄຄ່ຂື້ນແລ້ວຄົນທີ່ເປັນໂຣກໝາກເບີດຕ້ອງບໍ່ໄປເຮັດວຽກ ຫລື ໄປໂຮງຮຽນ 9 ມື້.
- ກິນ ໄທເລນອລ (Tylenol) ສຳລັບຄີງຮ້ອນ ແລະ ເຈັບ. ການກິນອາຫານອ່ອນໆສາມາດຊ່ອຍໃຫ້ເຈັບປວດໜ້ອຍລົງໄດ້ຄືກັນ.

### ຈະປ້ອງກັນຈາກໂຣກໝາກເບີດດ້ວຍວິທີໃດ?

ເດັກນ້ອຍອາຍຸ 12 ຫາ 15 ເດືອນຕ້ອງສັກຢາປ້ອງກັນໂຣກໝາກເບີດ ແລະ ສັກຢານີ້ອີກເມື່ອອາຍຸໄດ້ 4 ຫາ 5 ປີເພື່ອເປັນພາກສ່ວນຂອງການສັກຢາ MMR . ສັກຢາສອງເທື່ອເປັນຜົນດີ 90% ເພື່ອປ້ອງກັນໂຣກນີ້. ຜູ້ໃຫຍ່ທີ່ເກີດກ່ອນປີ 1957 ຖືວ່າມີຄວາມຄຸ້ມກັນຕໍ່ພະຍາດໄດ້.

### ສຳລັບລາຍລະອຽດເພີ່ມເຕີມກ່ຽວກັບ ໂຣກໝາກເບີດ ໃຫ້ຕິດຕໍ່ໄປທີ່:

Ottawa County Health Department
www.miOttawa.org
Center for Disease Control and Prevention
www.cdc.gov/nip/diseases/mumps/default.htm
ລາກໂທຣະສັບ: (888) 246-2675


12251 James St., Suite 400
Holland, MI 49424

ເລກໂທຣະສັບ: (616) 396-5266
ເລກແຟັກ: (616) 393-5643

ແວບໄຊ: www.miOttawa.org